International Labour Organization



# ການຝຶກອົບຮົມການປົກປ້ອງສັງຄົມ ໃນ ສປປ ລາວ





International Labour Organization



# ການຝຶກອົບຮົມການປົກປ້ອງສັງຄົມ ໃນ ສປປ ລາວ

## ຫຼັກສູດ 1

ພາກສະເໜີກ່ຽວກັບການປົກປ້ອງສັງຄົມ

## ກິດຈະກຳ10: ແບບມີເງື່ອນໄຂ  ແລະ ແບບບໍ່ມີເງື່ອນໄຂ

| | | |
|---|---|---|
| | **ຂັ້ນຕອນ:** | 1. ຖາມຜູ້ເຂົ້າຮ່ວມ "ທ່ານເຊື່ອໃນວິທີການເລັ່ງໃສ່ເປົ້າໝາຍອັນໃດ?"<br>2. ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມທົບທວນຄືນບົດຮຽນຜ່ານມາກ່ຽວກັບບ່ອນທີ່ມີຄວາມສ່ຽງ ແລະ ສະພາບຄວາມເປັນຈິງທີ່ໄດ້ສົນທະນາກັນຜ່ານມາ.<br>3. ບອກຜູ້ເຂົ້າຮ່ວມຢືນຢູ່ຕໍ່ໜ້າຄຳຕອບຂອງເຂົາເຈົ້າ:<br>• ແບບມີເງື່ອນໄຂ<br>• ແບບມີເງື່ອນໄຂທີ່ບໍ່ຮຸນແຮງ<br>• ແບບບໍ່ມີເງື່ອນໄຂຫຍັງທັງໝົດ<br><br>4. ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມແລກປ່ຽນວ່າເປັນຫຍັງເຂົາເຈົ້າຈຶ່ງຢືນຢູ່ບ່ອນທີ່ເຂົາເຈົ້າຢືນຢູ່. |

# ພາກທີ 6

## ປະເພດຂອງການປົກປ້ອງສັງຄົມ

*ຮຽນຮູ້ກ່ຽວກັບອົງປະກອບສຳຄັນຂອງການປົກປ້ອງສັງຄົມ, ໂດຍສະເພາະການອຸດໜູນເງິນ*

# ທ່ານຄິດວ່າເງື່ອນໄຂໃດທີ່ເໝາະສົມກັບໂຄງການປົກປ້ອງສັງຄົມຢູ່ ສປປ ລາວ ທີ່ສຸດ?

- ແບບມີເງື່ອນໄຂ
- ແບບມີເງື່ອນໄຂທີ່ບໍ່ຮຸນແຮງ
- ແບບບໍ່ມີເງື່ອນໄຂຫຍັງທັງໝົດ

International Labour Organization

# ປະເພດຂອງເງື່ອນໄຂ

| ເງິນອຸດໜູນ ແບບມີເງື່ອນໄຂ | ເງິນອຸດໜູນແບບ ບໍ່ມີເງື່ອນໄຂ | ເງິນອຸດໜູນແບບ ມີເງື່ອນໄຂທີ່ບໍ່ຮຸນແຮງ |
|---|---|---|
| ຮຽກຮ້ອງໃຫ້ຜູ້ໄດ້ຮັບການອຸດໜູນປະຕິບັດຕາມເງື່ອນໄຂສະເພາະໃດໜຶ່ງໃນການຮັບເງິນ. ສ່ວນຫຼາຍແລ້ວແມ່ນພົວພັນກັບ ການເຂົ້າໂຮງຮຽນຫຼືການດູແລສຸຂະພາບ (ຕົວຢ່າງ, 90 ເປີເຊັນໄດ້ເຂົ້າໂຮງຮຽນ ຫຼື ຝາກທ້ອງ).ຖ້າຜູ້ໄດ້ຮັບການອຸດໜູນບໍ່ປະຕິບັດຕາມເງື່ອນໄຂເຫຼົ່ານີ້ ແມ່ນຈະໄດ້ມີການໃສ່ມາດຕະການ ຫຼື ປັບໂທດ (ເຊັ່ນ ຢຸດເຊົາໂອນເງິນ). | ເງື່ອນໄຂ ບໍ່ໄດ້ຮຽກຮ້ອງໃຫ້ຜູ້ໄດ້ຮັບການອຸດໜູນທີ່ເປັນເປົ້າໝາຍຕ້ອງປະຕິບັດຕາມເງື່ອນໄຂສະພາະໃດໜຶ່ງ. | ວິທີການປະສົມປະສານ. ແມ່ນເພື່ອເຕືອນໃຫ້ປະຊາຊົນຮູ້ວ່າການທີ່ເຂົາເຈົ້າຈະໄດ້ຮັບການອຸດໜູນເງິນສົດນັ້ນແມ່ນເພື່ອໃຫ້ບັນລຸເປົ້າຫມາຍຂອງໂຄງການໄດ້ຫຼາຍຂຶ້ນ, ໂດຍບໍ່ຕ້ອງໄດ້ແບກຫາບພາລະໜັກໃນການຕິດຕາມແລະການປະເມີນຜົນ (M&E)ໂຄງການທີ່ໃຫ້ການອຸດໜູນແບບມີເງື່ອນໄຂທີ່ແທ້ຈິງ. ສິ່ງທີ່ແຕກຕ່າງກັບການອຸດໜູນແບບມີເງື່ອນກໍຄື ຖ້າຜູ້ໄດ້ຮັບການອຸດໜູນບໍ່ປະຕິບັດຕາມເງື່ອນໄຂທີ່ພໍຮັບໄດ້ນັ້ນ ແມ່ນຈະບໍ່ໄດ້ມີການປັບໂທດ ຫຼື ໃສ່ມາດຕະການກັບຜູ້ໄດ້ຮັບການອຸດໜູນ. |

Source: Hemsteede 2018.

International Labour Organization

- **ທາງເລືອກນະໂຍບາຍທີ່ສຳຄັນ: ການເຂົ້າເຖິງການອຸດໜູນຄວນຈະເຮັດໃຫ້ເປັນເງື່ອນໄຂ**ຕໍ່ຜູ້ຮັບຜົນປະໂຫຍດ ແລະ ໃຫ້ສອດຄ່ອງກັບພຶດຕິກຳສະເພາະທີ່ລັດຖະບານກຳນົດໄວ້.

- **ມີຫຼາຍເງື່ອນໄຂທີ່ຖືກ**ເຊື່ອມໂຍງເຂົ້າກັບ ການເຂົ້າໂຮງຮຽນ **ຫຼື** ການກວດສຸຂະພາບ **ຊຶ່ງຫາກບໍ່ປະຕິບັດຕາມຈະຖືກລົງໂທດ:**
  - ທຶນນັກຮຽນຍິງໃນໂຮງຮຽນມັດທະຍົມຕອນຕົ້ນ **Punjab ໃນປາກິດສະຖານ** ມີເງື່ອນໄຂສຳລັບເຂົ້າໂຮງຮຽນ 70 ເປີເຊັນ
  - ໂຄງການ **Pantawid ຂອງຟີລິບປິນ,** ການຈ່າຍເງິນແມ່ນມີເງື່ອນໄຂສຳລັບເຂົ້າໂຮງຮຽນ 85 ເປີເຊັນ

***Source:*** *(UN ESCAP and Development Pathways, 2018)*

# ເປັນຫຍັງຕ້ອງມີເງື່ອນໄຂ

ລວມຢູ່ໃນໂຄງການຊ່ວຍເຫຼືອທີ່ມີເປົ້າໝາຍເປັນຜູ້ທຸກຍາກ:

- ເພື່ອປ່ຽນແປງພຶດຕິກຳຂອງຜູ້ທຸກຍາກ
- ເພື່ອໂນ້ມນ້າວຜູ້ເສຍພາສີວ່າຜູ້ທີ່ໄດ້ຮັບຜົນປະໂຫຍດບໍ່ໄດ້ຮັບຜົນປະໂຫຍດເທົ່າທີ່ຄວນ

***Source:** (UN ESCAP and Development Pathways, 2018)*

International Labour Organization

# ບັນຫາສຳຄັນກ່ຽວກັບເງິນອຸດໜູນແບບມີເງື່ອນໄຂ

- ມີຫຼັກຖານເລັກໜ້ອຍສະແດງໃຫ້ເຫັນວ່າເງື່ອນໄຂມີຜົນກະທົບຕໍ່ພຶດຕິກຳຂອງຜູ້ໄດ້ຮັບຜົນປະໂຫຍດ
- ສະໜອງຄວາມໝັ້ນຄົງດ້ານລາຍຮັບຂັ້ນຕໍ່າໃຫ້ຄອບຄົວທີ່ສາມາດຊ່ວຍໃຫ້ເຂົາເຈົ້າລົງທຶນໃສ່ສະຫວັດດີພາບຂອງສະມາຊິກແຕ່ລະຄົນໃນຄອບຄົວ

***Source:*** *(UN ESCAP and Development Pathways, 2018)*

International Labour Organization

# ບັນຫາສຳຄັນກ່ຽວກັບເງິນອຸດໜູນແບບມີເງື່ອນໄຂ

- ການໃຊ້ເງື່ອນໄຂ ແລະ ການລົງໂທດ ເຮັດໃຫ້ວຽກງານປົກປ້ອງສັງຄົມຍິ່ງມີຄວາມຊັບຊ້ອນຫຼາຍຂຶ້ນ
- ຕົວຢ່າງ:
  - ການເກັບກຳຂໍ້ມູນ ແລະ ການຈ່າຍອຸດຫນູນຕ່າງໆເປັນການເພີ່ມລາຍຈ່າຍດ້ານບໍລິຫານ ແລະ ເປັນການສ້າງພາລະໃຫ້ກັບພະນັກງານຄູອາຈານ ແລະ ພະນັກງານອື່ນໆ.

***Source:*** *(UN ESCAP and Development Pathways, 2018)*

International Labour Organization

# ບັນຫາສຳຄັນກ່ຽວກັບເງິນອຸດໜູນແບບມີເງື່ອນໄຂ

- ເງື່ອນໄຂທີ່ຂັດກັບຈຸດປະສົງຂອງວຽກງານປົກປ້ອງສັງຄົມ...
  - ຜູ້ທີ່**ບໍ່ສາມາດປະຕິບັດຕາມເງື່ອນໄຂ** ສ່ວນຫຼາຍແມ່ນກຸ່ມຄົນດ້ອຍໂອກາດ ແລະ ທຸກຍາກ
  - ຕ້ອງການບໍລິການສາທາລະນະ ເຊັ່ນວ່າ ຕ້ອງການເຂົ້າໂຮງຮຽນ ຫຼື ຮັບການປິ່ນປົວຢູ່ສະຖານບໍລິການສຸຂະພາບ **ແຕ່ບໍ່ມີການບໍລິການ ຫຼື ບໍ່ສາມາດເຂົ້າເຖິງ**ໄດ້ທັງໝົດ.

***Source:*** *(UN ESCAP and Development Pathways, 2018)*

# ທາງເລືອກ ແລະ ຄຳແນະນຳ

- ເພີ່ມການລົງທຶນໃສ່ກອງທຶນເພື່ອວ່າເຂົາເຈົ້າຈະສາມາດໄດ້ຮັບການບໍລິການທີ່ທົ່ວເຖິງ
  - **ຕົວຢ່າງ:** ປະເທດມົງໂກເລຍ- ກອງທຶນເພື່ອເດັກ

- ສະເໜີສິ່ງຈູງໃຈ **ເຊັ່ນວ່າ** ຈ່າຍຄ່າຮຽນໃຫ້ **ຖ້າຫາກເດັກນ້ອຍມາລົງທະບຽນຮຽນ ດີກວ່າທີ່ຈະຍົກເລີກການອຸດໜູນຫາກບໍ່ມີການສືບຕໍ່ຮ່ຳຮຽນ**

***Source:*** *(UN ESCAP and Development Pathways, 2018)*

International Labour Organization

# ທາງເລືອກ ແລະ ຄໍາແນະນໍາ

- **ນໍາການໃສ່ສັນຍາລັກໃຫ້ກໍາລັງໃຈ**ເຂົ້າໃນການອອກແບບກອງທຶນອຸດໜູນ
  - *ຕົວຢ່າງ: ເດັກນ້ອຍສາມາດລົງທະບຽນໃນລະບົບປົກປ້ອງສັງຄົມຢູ່ໃນ ໂຮງຮຽນ ເພື່ອສະແດງໃຫ້ເຫັນເຖິງການເຊື່ອມໂຍງລະຫວ່າງການອຸດ ໜູນ ແລະ ການສະແຫວງຫາການສຶກສາ.*

- ໃຫ້ຜູ້ດູແລເດັກເຊັນຄໍາໝັ້ນສັນຍາ**ວ່າຈະສົ່ງລູກຂອງເຂົາເຈົ້າເຂົ້າຮຽນ**

- ໃສ່ຊື່ໂຄງການທີ່ສື່ຄວາມໝາຍຊັດເຈນ**ເຖິງຈຸດປະສົງຂອງໂຄງການ**ໂດຍບໍ່ມີເງື່ອນໄຂບັງຄັບ
  - **ຕົວຢ່າງ:** ທຶນຊ່ວຍເຫລືອເດັກ ອັບຟຣິກາໃຕ້

*ແຫຼ່ງຂໍ້ມູນ: (UN ESCAP and Development Pathways, 2018)*

# ກໍລະນີສຶກສາ 1: ໂຄງການອຸດໜູນແມ່ ແລະ ເດັກ (MECG)

- ໂຄງການອຸດໜູນແມ່ ແລະ ເດັກ (MECG) ແມ່ນໂຄງການຮ່ວມມືກັນລະຫວ່າງ ອົງການ UNICEF, ອົງການ ILO ແລະ ອົງການ UNCDF ແນໃສ່ປັບປຸງການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ການປົກປ້ອງເດັກ ສໍາລັບແມ່ຍິງຖືພາ ແລະ ເດັກນ້ອຍ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

- ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 2596 ຄົນ ຢູ່ພາກໃຕ້ຂອງລາວ ທີ່ໄດ້ລົງທະບຽນໃນໂຄງການ MECG, ເຊິ່ງເປັນໂຄງການທົດລອງການອຸດໜູນເງິນໃຫ້ແມ່ຍິງຖືພາ ແລະ ເດັກ ແນໃສ່ປັບປຸງອັດຕາການສັກຢາວັກຊີນ ແລະ ເຂົ້າເຖິງການຝາກທ້ອງ ແລະ ການບໍລິການຫຼັງເກີດ.

# ກໍລະນີສຶກສາ 1: ໂຄງການອຸດໜູນແມ່ ແລະ ເດັກ (MECG)

- ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການດັ່ງກ່າວຈະໄດ້ຮັບການອຸດໜູນໂດຍກົງ 150,000 ກີບຕໍ່ເດືອນ, ການຈ່າຍແມ່ນໄດ້ຈ່າຍທຸກໆສອງເດືອນ ຕົກເປັນເງິນຢູ່ 300,000 ກີບ, ຜ່ານລະບົບ ຢູ ມັນນີ ( U-Money) ຫຼື ຈ່າຍເງິນສົດໃຫ້ກັບທີ່ ໂດຍຜ່ານ ສະຕາ ຟິນເທັກ (Star Fintech).
- ການອອກແບບໂຄງການ MECG ໄດ້ນໍາໃຊ້ວິທີການແບບມີເງື່ອນໄຂ "ທີ່ຜໍຮັບໄດ້.
- ການອຸດໜູນເງິນແມ່ນບໍ່ໄດ້ນໍາໃຊ້ແບບມີເງື່ອນໄຂຄົບຖ້ວນ, ແຕ່ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ MECG ກໍຮູ້ເຖິງຈຸດປະສົງຂອງໂຄງການເປັນຢ່າງດີ.

Source: UN ESCAP 2018.

International Labour Organization

# ກໍລະນີສຶກສາ: ໂຄງການອຸດໜູນການສຶກສາແບບມີເງື່ອນໄຂ (CCTE)



International Labour Organization

# ກໍລະນີສຶກສາ 2: ໂຄງການອຸດໜູນການສຶກສາແບບມີເງື່ອນໄຂ (CCTE)

**ປະເທດຕຸລະກີ ມີໂຄງການເງິນອຸດໜູນການສຶກສາແບບມີເງື່ອນໄຂ (CCTE) ທີ່ປະສົບຜົນສໍາເລັດມາຕັ້ງແຕ່ປີ 2003**

- ຫລາຍລ້ານຄອບຄົວ ແລະ ເດັກນ້ອຍໄດ້ຮັບຜົນປະໂຫຍດມາແລ້ວຫຼາຍກວ່າ 20 ປີ
- ໂຄງການເງິນອຸດໜູນການສຶກສາແບບມີເງື່ອນໄຂ (CCTE) ໄດ້ຖືກຂະຫຍາຍເພື່ອປົກຄຸມເດັກນ້ອຍອົບພະຍົບທີ່ຢູ່ໃນໄວຮຽນ ທີ່ມາອາໃສຢູ່ປະເທດຕຸລະກີຊົ່ວຄາວ/ພາຍໃຕ້ການປົກປ້ອງຂອງສາກົນ
- ລະບຽບການເກີດສິດ ແລະ ມູນຄ່າ/ ອັດຕາການອຸດໜູນທີ່ເດັກນ້ອຍຕົວກກີໃນໂຄງການ CCTE ແຫ່ງຊາດໄດ້ຮັບ ກໍໄດ້ນໍາໃຊ້ກັບຜູ້ໄດ້ຮັບຜົນປະໂຫຍດຈາກຊາວຊີເຣຍ ແລະ ຊາວອົບພະຍົບອື່ນໆ

International Labour Organization

# ກໍລະນີສຶກສາ 2: ໂຄງການອຸດໜູນການສຶກສາແບບມີເງື່ອນໄຂ (CCTE)

- ຄອບຄົວຈະໄດ້ຮັບ**ເງິນອຸດໜູນທຸກໆ 2 ເດືອນ** ຜ່ານ ບັດ Kızılaycard
  - ***ເງື່ອນໄຂ:*** *ເດັກຕ້ອງເຂົ້າຮຽນເປັນປົກກະຕິ (ຢ່າງໜ້ອຍສຸດ 80 ເປີເຊັນ) ໃນສົກຮຽນກ່ອນໜ້ານີ້.*

- ນັກຮຽນໄດ້ລົງທະບຽນຮຽນໃນໂຮງຮຽນລັດຖະບານຂອງຕວັກກີ, ສູນການສຶກສາຊົ່ວຄາວ ແລະ ຫຼັກສູດຮຽນເລັ່ງລັດ ແມ່ນມີສິດໄດ້ຮັບຜົນປະໂຫຍດທັງໝົດຈາກໂຄງການນີ້.

# ຄຳຖາມສະທ້ອນແນວຄວາມຄິດ

ໃຜເປັນຜູ້ແບກຫາບພາລະໃນການປະຕິບັດຕາມເງື່ອນໄຂ? ລວມທັງຜູ້ໄດ້ຮັບຜົນປະໂຫຍດ ແລະ ພາກສ່ວນຈັດຕັ້ງປະຕິບັດ.

ທ່ານຄິດວ່າ ການອຸດໜູນແບບບໍ່ມີເງື່ອນໄຂ ຈະນຳໄປສູ່ການເພິ່ງພາອາໄສ/ເອື້ອຍອີງ ແລະ ຂີ້ຄ້ານບໍ?

ຜົນກະທົບຂອງການອຸດໜູນແບບມີເງື່ອນໄຂຕໍ່ບົດບາດຍິງຊາຍມີຫຍັງແດ່?

International Labour Organization

## ກິດຈະກຳ 11:  “ສິງໃສລະແວງ” ແລະ “ຜູ້ທີ່ເຊື່ອ”

| | | |
|---|---|---|
| | ຂັ້ນຕອນ: | 1. ບອກຜູ້ເຂົ້າຮ່ວມຄິດເຖິງສິ່ງທີ່ພວກເຮົາໄດ້ຮຽນຈາກພາກທີ 1.<br>2. ຖາມຈຸດຢືນຂອງເຂົາເຈົ້າຕໍ່ກັບການປົກປ້ອງສັງຄົມ ແລະ ເລືອກວ່າລະຫວ່າງສອງປະໂຫຍດເຫຼົ່ານີ ແມ່ນປະໂຫຍກໃດສະແດງໃຫ້ເຫັນເຖິງຈຸດຢືນຂອງເຂົາເຈົ້າ: "ຂ້ອຍເຊື່ອວ່າການປົກປ້ອງສັງຄົມແມ່ນການຊ່ວຍເຫລືອແລະເຮັດໃຫ້ຜູ້ທຸກຍາກເອື່ອຍອີງໃສ່ຄົນອື່ນ " ຫຼື "ຂ້ອຍເຊື່ອວ່າການປົກປ້ອງສັງຄົມແມ່ນການລົງທຶນໃສ່ອານາຄົດ".<br>3. ແນະນຳເຂົາໃຫ້ຢືນຢູ່ບ່ອນໃດບ່ອນຫນຶ່ງ ແລະ ຄິດກ່ຽວກັບເຫດຜົນວ່າເປັນຫຍັງເຂົາເຈົ້າຈຶ່ງສະຫນັບສະຫນູນສິ່ງເຫລົ່ານີ້.<br>4. ຊຸກຍູ້ໃຫ້ແລກປ່ຽນຄວາມເຂົ້າໃຈຢູ່ໃນຫ້ອງປະຊຸມລວມ |

## ກິດຈະກຳ 11: “ສິ່ງໃສລະແວງ” ແລະ “ຜູ້ທີ່ເຊື່ອ”

| | | |
|---|---|---|
| | **ບັນທຶກຂອງຜູ້ອຳນວຍຄວາມສະດວກ** | ຖາມຄວາມເຫັນໃນຫ້ອງປະຊຸມເພື່ອໃຫ້ຜູ້ເຂົ້າຮ່ວມສາມາດນຳສະເໜີເຫດຜົນຂອງເຂົາເຈົ້າ. ກວດເບິ່ງວ່າທັງສອງກຸ່ມໄດ້ໃຫ້ເຫດຜົນຄ້າຍຄືກັນບໍ, ແລະ ກວດເບິ່ງວ່າ ຜູ້ລະແວງສິ່ງໃສໄດ້ຖືກໂນ້ມນ້າວຈິດໃຈຈາກຜູ້ທີ່ເຊື່ອຫຼືບໍ. ຂ້າງລຸ່ມນີ້ (ບໍ່ມີລຳດັບສະເພາະໃດໜຶ່ງ) ແມ່ນບັນດາເຫດຜົນ ແຕ່ຍັງບໍ່ທັນຄົບຖ້ວນເຊິ່ງອາດຈະຖືກຍົກຂຶ້ນມາເພື່ອເປັນຕົວຢ່າງ ແລະ ເພື່ອການກະກຽມເທົ່ານັ້ນ.<br><br>ແນວຄວາມຄິດເຫັນຂອງຜູ້ລະແວງສິ່ງໃສມີຮາກຖານເລິກເຊິ່ງ, ແລະ ພວກເຮົາອາດຈະໄດ້ພົບພໍ້ກັບບັນຫານີ້ເຊັ່ນກັນ - ຄຽງຄູ່ກັບການເປັນຜູ້ປະຕິບັດຕົວຈິງໃນວຽກງານປົກປ້ອງສັງຄົມ. ມີແຕ່ຫຼັກຖານຢ່າງດຽວແມ່ນຍັງບໍ່ພຽງພໍທີ່ຈະໂນ້ມນ້າວຈິດໃຈ ຫຼື ແນວຄວາມຄິດຂອງຄົນອື່ນ. ພວກເຮົາຕ້ອງມີຄວາມເຂົ້າໃຈຕໍ່ກັບຈຸດຢືນຂອງເຂົາເຈົ້າເປັນຢ່າງດີ ເພື່ອຫາເຫດຜົນມາສົນທະນາກັບເຂົາເຈົ້າ, ກົດ "ປຸ່ມ" ທີ່ຈະເກີດປະຕິກະລິຍາ.<br><br>ໃຫ້ຜູ້ເຂົ້າຮ່ວມແລກປ່ຽນການປ່ຽນແປງຈິດໃຈທີ່ເກີດຂຶ້ນກັບເຂົາເຈົ້າ, ແລະ ຈະນຳໃຊ້ແນວຄວາມຄິດ ໃໝ່ເຂົ້າໃນສະພາບແວດລ້ອມການເຮັດວຽກໃນປະຈຸບັນໄດ້ຢູ່ໃສແດ່ ແລະ ໃຊ້ແນວໃດແດ່? |

# ພາກທີ 7

## ສັງລວມຄວາມເຂົ້າໃຈກ່ຽວກັບການປົກປ້ອງ ສັງຄົມ

International Labour Organization

## ກິດຈະກຳ 11: “ສິງໃສລະແວງ” ແລະ “ຜູ້ທີ່ເຊື່ອ”

"ຂ້ອຍເຊື່ອວ່າການປົກປ້ອງສັງຄົມ
ແມ່ນເປັນການໃຫ້ລ້າ ແລະ ເຮັດ
ໃຫ້ຜູ້ທຸກຍາກເກີດການເອື້ອຍອີງ"

“ຂ້ອຍເຊື່ອວ່າການປົກປ້ອງສັງຄົມ
ແມ່ນການລົງທຶນເພື່ອອະນາຄົດ”



- ຈົບ -